# one ການກະທຳທີ່ກ້າຫານ

## ຢຸດເຊົາການນຳໃຊ້ຢາ OPIOID ໄປໃນທາງທີ່ບໍ່ຖືກຕ້ອງ

**ຊ່ວຍເຫຼືອເພື່ອນ. ແບ່ງປັນຂໍ້ເທັດຈິງ.**

ມັນສາມາດເລີ່ມຕົ້ນໄດ້ພຽງບາດກ້າວດຽວ. ໜຶ່ງການກະທຳທີ່ກ້າຫານ. ໜຶ່ງການສົນທະນາຢ່າງກົງໄປກົງມາ.

ເມື່ອເວົ້າເຖິງການປ້ອງກັນການນຳໃຊ້ຢາ Opioid ໄປໃນທາງທີ່ບໍ່ຖືກຕ້ອງ, ທ່ານສາມາດຈະສ້າງຄວາມແຕກຕ່າງໄດ້.

ໃນປັດຈຸບັນນີ້ ຢາ Opioid ແມ່ນໜຶ່ງໃນບັນດາສາເຫດຕົ້ນຕໍຂອງການເສຍຊີວິດຈາກການບາດເຈັບໃນລັດວໍຊິງຕັນ. ມີຄົນເສີຍຊີວິດຍ້ອນການກິນຢາເກີນປະລິມານຫຼາຍກ່ວາຍ້ອນອຸບັດເຫດລົດຕຳກັນ.[1]

ໃນແຕ່ລະມື້, ມີຫຼາຍກວ່າ 1,000 ຄົນໄດ້ຮັບການປິ່ນປົວຢູ່ພະແນກສຸກເສີນ ຍ້ອນບໍ່ໄດ້ນຳໃຊ້ຢາ Opioid ຕາມຄຳແນະນຳ.[2]

ໃນປີ 2015, 718 ຄົນໃນ ລັດວໍຊິງຕັນໄດ້ເສຍຊີວິດຈາກການໃຊ້ຢາເກີນຂະໜາດທີ່ກ່ຽວຂ້ອງກັບ opioids.[1]

## ທາງເລືອກຂອງທ່ານແມ່ນມີຄວາມສຳຄັນ

ຫ້າມແບ່ງປັນຢາ opioid ຕາມແພດສັ່ງໃຫ້ກັບບຸກຄົນອື່ນ.

ວຽກປິ່ນປົວ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອ, ໃຫ້ໂທຫາສາຍໃຫ້ການຊ່ວຍເຫຼືອການຟື້ນຟູຂອງລັດວໍຊິງຕັນ ໄດ້ທີ່ເບີ **1 (866) 789-1511**.

ກຳຈັດຢາທີ່ບໍ່ໄດ້ໃຊ້ແລ້ວຖິ້ມຢ່າງປອດໄພໃສ່ໂຄງການເກັບຢາກັບຄືນທີ່ຢູ່ໃກ້ທ່ານ. ຊອກຫາໄດ້ທີ່ **TakeBackYourMeds.org**.

Washington State Health Care Authority

# ຮັບຮູ້ຂໍ້ເທັດຈິງ

## ຢາ Opioid ແມ່ນຫຍັງ?

ຢາ Opioid ແມ່ນເປັນຢາສະເພາະກຸ່ມທີ່ໃຊ້ທົ່ວໄປ ເພື່ອຫຼຸດຜ່ອນຄວາມເຈັບປວດ.

ຢາເຮໂຣອິນທີ່ຜິດກົດໝາຍ ແມ່ນເປັນຢາ opioid ຊະນິດໜຶ່ງ ຄືກັນກັບຢາແກ້ປວດຫຼາຍຊະນິດທີ່ແພດສັ່ງ.

ຢາ Opioid ສາມາດສົ່ງຜົນກະທົບທາງລົບຕໍ່ສູນກາງໃຫ້ລາງວັນໃນສະໝອງ. ເມື່ອເວລາຜ່ານໄປ, ຜູ້ໃຊ້ຈະຕ້ອງການຫຼາຍຂຶ້ນເລື້ອຍໆ, ເຮັດໃຫ້ຕິດຢາເຫຼົ່ານີ້ຢ່າງແຮງ.[3]

# ທາງເລືອກໃນການບັນເທົາຄວາມເຈັບປວດອື່ນໆ

ຖ້າທ່ານໄດ້ຮັບຢາ Opioid ຕາມແພດສັ່ງ, ໃຫ້ລົມກັບທ່ານໝໍຂອງທ່ານກ່ຽວກັບທາງເລືອກອື່ນ.

ປຶກສາກັບຜູ້ໃຫ້ບໍລິການດ້ານສຸຂະພາບເຊີງພຶດຕິກຳ ກ່ຽວກັບວິທີການຕ່າງໆທີ່ສາມາດຊ່ວຍຄວບຄຸມຄວາມຕຶງຄຽດໄດ້.[2]

ລອງໃຊ້ວິທີການກາຍຍະບຳບັດ ຫຼື ການບຳບັດອື່ນໆ ເຊັ່ນ: ການຝັງເຂັມ ຫຼື ການນວດ.[2]

**ຮຽນຮູ້ເພີ່ມຕື່ມໄດ້ທີ່**

**GetTheFactsRx.com**

ແຫຼ່ງທີ່ມາ: [1]ພະແນກສາທາລະນະສຸກແຫ່ງລັດວໍຊິງຕັນ
[2]ສູນຄວບຄຸມ ແລະ ການປ້ອງກັນພະຍາດ
[3]ສະຖາບັນຄວບຄຸມການນຳໃຊ້ຢາເສບຕິດແຫ່ງຊາດ ສຳລັບໄວລຸ້ນ

ສຳລັບຂໍ້ມູນເພີ່ມເຕີມ, ສາມາດຕິດຕໍ່ໄດ້ທີ່:
kingcounty.gov/overdose

King County

Washington State Health Care Authority